# ວັນອາທິດປິດລາຍການ

ໂດຍ: ໜູ ນິຣາວັນ

ວັນນີ້ສິເຈີດຈ້າ ນະພາແຈ່ມແວວວາວ
ເຝື້ອສີຂາວ ລຽນໄຫຼ ດູດັ່ງນວນຍອງຝ້າຍ
ລົມໂຊຍຜິວໃບໄມ້ ມວນພຶກສາໄກວແກວ່ງ
ແສງແດດໃສສ່ອງເຫຼື້ອມ ສຽງແຊວຮ້ອງມ່ວນຍິນ

ຄືນສັງສັນສຳເຣັດຊິ້ນ ເຊົ້າມື້ໃຫມ່ ໄດ້ຫມຸນວຽນ
ປ່ຽນເປັນວັນອາທິດ ມິດເພື່ອນຄຣູມາໂຮມເຕົ້າ
ປິດລາຍການມາຊຸມເຊົ້າ ສາມັກຄີກ່ອນຊິຈາກ
ບາງພາກສ່ວນຄືນສູ່ຢ້າວ ເມືອບ້ານໄດ້ສັ່ງກັນ

ບັນຍາກາດໃນມື້ນັ້ນ ຕິດຈາຣຶກໄປຍືນຍາວ
ນຸ່ງເສື້ອຂາວຄືກັນຫມົດ ດຸດດັ່ງຄາວຣຍນພຸ້ນ
ພາກັນໂອເອວຸ້ນ ຊຸນລະມຸນ ຖ່າຍຮູບຮ່ວມ
ບາງຖ່າຍນຳສ່ວນຮວມ ບາງກໍແຍກກຸ່ມກ້ອນ ສະອອນຍິ້ມຍອກກັນ

ບາງກໍໂຮມແຕ່ຊັ້ນ ຕາມຣຸ່ນສ່ຳປີຣຽນ
ວິນວຽນຄົວອາຫານ ຊ່ວຍແຕ່ງກິນກະຜອງນັ້ນ
ມີລາບກວາງເປັນຂອງແກ້ມ ແຖມຍັງມີລາບກະຮອກ
ບອກວ່າແສນແຊບຊ້ອຍ ຊອຍເຫັດປີ້ງປິ່ນຕຳ

ຫຼາຍຄົນ... ຮອດບໍ່ໄດ້ດື່ມນ້ຳ ຍ້ອນເມົາດື່ມແຕ່ເບຍລາວ
ບາງຄົນຍັງມຶນເມົາ ບໍ່ຊ່ວງເທີຍແຕ່ຄືນນີ້
ເບິ່ງເປັນສີຊີງລົ້ນ ເປັນໂຊງໂລງ ຢືນບໍ່ທ່ຽງ

ສຽງຄໍຍັງແຫບແຫ້ງ          ຈົນຜອງແຈ້ງບໍ່ໄດ້ນອນ

ຍິນສະອອນຢູ່ບໍ່ແລ້ວ          ແນວເສື້ອນຸ່ງສີດີກັນ
ທັງນັກຮຽນ  ທັງອາຈານ          ຕະງ່ານຕາຂາວຈ້າ
ເບິ່ງແລ້ວພາໃຈຊື່ນ          ຄິດຫວນຄືນຄາວອະດີດ
ລູກສິດຄຣູທຸກຊັ້ນ          ຄືກັນລ້ວນນຸ່ງເສື້ອຂາວ

ທຸກຄົນໃຈຊື່ນຫ້າວ          ບາງຄົນສັ່ງລາເມືອ
ເຫຼືອໃຈນຳເວລາ          ກຳນົດເດີນທາງແລ້ວ
ໂບກມືລາສຽງແຈ້ວ          ສຽງແຊວໆ  ເອີ້ນສັ່ງ
ຫຼັ່ງນ້ຳຕາສະອື້ນ          ທັງຢືນກັ້ນບໍ່ອອກສຽງ

ພຽງຈຳນວນຫນຶ່ງນັ້ນ          ໄດ້ເມືອກ່ອນແຕ່ຫົວທີ
ມີຈຳນວນຫຼວງຫຼາຍ          ຍັງຢູ່ເຖິງວັນຫນ້າ
ແລ້ວໄດ້ພາກັນເຂົ້າ          ເຮືອນຂັນເງິນຟັງການອ່ານ
ການຈັດງານເຮົາຄັ້ງນີ້          ແມ່ນດີແທ້ຊໍ່າໃດ?

ຊຸມອາຈານກໍຫາກໄດ້          ສລຸບເຣື່ອງເປັນບາງຕອນ
ສີພັນດອນ    ນາງຈັບໄມຄ໌          ໄຫ້ສັ່ງຊຶມ  ນ້ຳຕາເອື້ອນ
ພ້ອມທັງເຕືອນສະຕິໃຫ້          ຍາມຫນີໄກ  ໄດ້ສືບຕໍ່
ວັນທີ່ເຮົາຄອຍລໍ    ກາຍເປັນຈິງຂຶ້ນໄດ້     ຢ່າວາງໃຫ້ເຊື່ອມສູນ

ຍ້ອນບ້ານເມືອງເຮົາເກີດວຸ້ນ          ຈຶ່ງແຕກພ່າຍກັນໄລຫນີ
ສາມສິບປີຈຶ່ງມາເຫັນ          ນັບວ່າເປັນກຸສົລລ້ຳ
ຈຶ່ງສືບຖາມກັນໄວ້          ຍາມຈາກໄກໃຫ້ຄຶດຮອດ  ກັນເນີ
ຕລອດເຖິງງານເທື່ອຫນ້າ          ໃຫ້ມາພ້ອມ  ໄດ້ຮ່ວມກັນ  ແທ້ໃດ໋